ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

## ຜ-ຟຟລ ເຂົ້າຖືຮຸ້ນ ໃນເຂື່ອນໃຫຍ່ ແມ່ນ້ຳຂອງ ສ້າງຄວາມໝັ້ນໃຈ ແກ່ນັກລົງທຶນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ສ້າງຄວາມໝັ້ນໃຈແກ່ນັກລົງທຶນ ດ້ວຍການເຂົ້າຊື້ຮຸ້ນໃນເຂື່ອນໄຟຟ້າດອນສະໂຮງ ແລະ ເຂື່ອນໄຟຟ້າ ໄຊຍະບູລີ ເຊິ່ງເປັນເຂື່ອນຂະໜາດໃຫຍ່ ຕັ້ງຢູ່ແມ່ນ້ຳຂອງ ໂດຍມີກຳນົດການເລີ່ມເດີນເຄື່ອງຈັກ ຜະລິດໄຟຟ້າຢ່າງເປັນທາງການ ໃນເດືອນ ພະຈິກ 2019 ນີ້

ໂຄງການ ເຂື່ອນໄຟຟ້າດອນສາໂຮງ ຕັ້ງຢູ່ ເມືອງ ໂຂງ ແຂວງຈຳປາສັກ ເປັນເຂື່ອນໄຟຟ້າ ແບບຝາຍນ້ຳລົ້ນ (Run-off-River) ມີກຳລັງຕິດຕັ້ງ 260 ເມກາວັດ ສາມາດຜະລິດພະລັງງານໄຟຟ້າໂດຍສະເລ່ຍໄດ້ 2.028 ລ້ານກິໂລວັດໂມງ ຕໍ່ປີ.

ນອກຈາກເຂື່ອນໄຟຟ້າດອນສະໂຮງຈະເລີ່ມດຳເນີນການຜະລິດ ຢ່າງເປັນທາງການແລ້ວ ເຂື່ອນໄຟຟ້າໄຊຍະບູລີເຊິ່ງເປັນໂຄງການຂະໜາດໃຫຍ່ ເປັນເຂື່ອນໄຟຟ້າແບບຝາຍນ້ຳລົ້ນ (Run-off-River) ມີກຳລັງຕິດຕັ້ງທັງໝົດ 1.285 ເມກາວັດ ສາມາດຜະລິດ ພະລັງງານໄຟຟ້າໄດ້ 7.370 ລ້ານກິໂລວັດໂມງຕໍ່ປີ ກໍ່ກຽມພ້ອມ ດຳເນີນການຜະລິດຢ່າງເປັນທາງການໃນທ້າຍປີ 2019 ນີ້ເຊັ່ນກັນ.

ທັງສອງ ເຂື່ອນນີ້ ຜ-ຟຟລ ເຂົ້າຖືຮຸ້ນ 20 ສ່ວນຮ້ອຍ.








ຖະໜົນມິດຕະພາບລາວ-ໄທ,ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນສປປລາວຕູ້ປ.ນ 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la